# ບົດທີ 21

# ຄຳເວົ້າໃນພະຄຳພີເລື່ອງການຮັບສາລະພາບບາບ



ຜູ້ໃດກໍ່ຕາມຈະແຍງເບິ່ງໜ້າຕາໃນແວ່ນ

ກ່ອນຈະອອກເຮືອນໄປ.

ແວ່ນເບິ່ງຈິດວິນຍານຄືຫຍັງ?

ຈະໃຊ້ ຢ່າງໃດເພື່ອໃຫ້ຊື່ບອກບາບທີ່ຈະສາລະພາບ?

**1** ການສາລະພາບຜິດບາບເປັນຜົນສຳຄັນອັນໜຶ່ງທີ່ເກີດມາຈາກການຖິ້ມ _______________ (ຕື່ມຄວາມທີ່ຂາດ)

**2** ແຕ່ໃນການຮັບສາລະພາບຜິດບາບນັ້ນເຮົາຕ້ອງລະວັງຕົວໃນສອງດ້ານຄື: ຜູ້ທີ່ສາລະພາບດ້ວຍບໍ່ເອົາຈິງເອົາຈັງ ຫຼື ບໍ່ ຈິງໃຈຫຍັງໝົດແລະ ຜູ້ທີ່ສາລະພາບຫຼາຍເທື່ອໂດຍບໍ່ເຊື່ອວ່າພະເຈົ້າຈະຍົກໂທດໃຫ້. ໃນຄຳສາລະພາບ 3 ປະການຕໍ່ໄປນີ້ ແມ່ນອັນໃດທີ່ບໍ່ເອົາຈິງເອົາຈັງ?ໃຫ້ໝາຍວົງມົນເອົາຂໍ້ທີ່ຖືກ.

ກ. “ພະອົງເຈົ້າຂ້າ ຖ້າຂ້າພະເຈົ້າໄດ້ເຮັດບາບແລ້ວຂໍໃຫ້ພະອົງຍົກໂທດໃຫ້”

ຂ. “ພະອົງເຈົ້າ ມື້ວານນີ້ຂ້າພະເຈົ້າໄດ້ຕົວະນາຍເລື່ອງວຽກ ຂໍໃຫ້ພະອົງຍົກໂທດໃຫ້”

ຄ. “ຂ້າແດ່ອົງພະຜູ້ເປັນເຈົ້າ ຂ້າພະເຈົ້າຂໍໃຫ້ ພະເຈົ້າຍົກໂທດໃຫ້ເພາະໃຈຮ້າຍກັບເມຍດ້ວຍບໍ່ມີເຫດ”

**3** ຄຳສະຫຼຸບ ທີ່ວ່າ “ຖ້າຂ້າພະເຈົ້າໄດ້ເຮັດບາບແລ້ວຂໍໃຫ້ຍົກໂທດ” ຄົນນັ້ນບໍ່ຖືວ່າການຮັບສາລະພາບບາບມີນໍ້າ ໜັກປານໃດ. ເພິ່ນບໍ່ເຫັນວ່າການຮັບສາລະພາບບາບເປັນສິ່ງທີ່ສຳຄັນເພາະເພິ່ນບໍ່ຮັບຮູ້ບາບຂອງຕົນ. ຄົນຜູ້ນັ້ນອາດຈະບໍ່ໄດ້ປ່ຽນທ່າທີຕໍ່ບາບເທື່ອ. ໝາຍຄວາມວ່າ ເພິ່ນອາດບໍ່ໄດ້ຖິ້ມ ________________________________ (ຕື່ມຄວາມ)

ຕອບ:

**1** *ໃຈເກົ່າເອົາໃຈໃໝ່.*

**2** *ກ.ຖືກ.*

**3** *ໃຈເກົ່າເອົາໃຈໃໝ່.*

**4** ຄົນທີ່ເຊື່ອໃນພະເຢຊູ ແຕ່ຮັບສາລະພາບໂດຍບໍ່ຊີ້ບອກບາບເຫຼົ່ານັ້ນ ເຂົາອາດຈະສາລະພາບໂດຍບໍ່ ເອົາ ___________________ ເອົາ _________________ (ຕື່ມຄວາມທີ່ຂາດ)

**5** ການຮັບສາລະພາບບາບໂດຍບໍ່ເອົາຈິງເອົາຈັງນັ້ນ ຍັງປົກຄວາມບາບໄດ້. ທ່ານຈື່ ສຸພາສິດ 28:13 ບໍ່? "ຖ້າເຈົ້າພະຍາຍາມ ________________ ບາບໄວ້ຊີວິດຂອງເຈົ້າກໍ່ຈະບໍ່ຈະເລີນຈົ່ງຮັບ _________________ ແລະ ປ່ຽນໃຈໃໝ່ເສຍແລ້ວ ພະເຈົ້າຈະຊົງສຳແດງພະກະລຸນາຕໍ່ເຈົ້າ." (ຕື່ມຄວາມທີ່ຂາດ)

**6** ການສາລະພາບບາບ ຢ່າງບໍ່ເອົາຈິງເອົາຈັງ ທີ່ຈິງບໍ່ແມ່ນການສາລະພາບດອກ, ການສາລະພາບແທ້ຄືເຮົາຍອມ ຮັບຮູ້ ບາບຂອງເຮົາແລ້ວຂໍໃຫ້ພະອົງຍົກໂທດໃຫ້ ແຕ່ຜູ້ທີ່ສາລະພາບຢ່າງບໍ່ເອົາຈິງເອົາຈັງນັ້ນເປັນຢ່າງໃດ? ໃຫ້ເລືອກ

ກ. ບໍ່ເປັນຄຼິດສະຕຽນ.
ຂ. ບໍ່ຮັບຮູ້ບາບຂອງເຂົາ.
ຄ. ບໍ່ມີບາບ.
ງ. ຈື່ບາບບໍ່ໄດ້.

**7** ເຮົາຈະສາລະພາບຢ່າງຈິງໃຈແນ່ນອນດ້ວຍອ້ອນວອນຢ່າງໃດ? ໃຫ້ ໝາຍເອົາຂໍ້ທີ່ຖືກ.

ກ. ສາລະພາບບາບທົ່ວໄປ.
ຂ. ຮັບວ່າທຸກຄົນໃນໂລກເຄີຍເຮັດບາບຢ່າງໜຶ່ງຢ່າງໃດທັງເຮົາເໝືອນກັນດ້ວຍ.
ຄ. ຮັບຮູ້ບາບຂອງຕົນຢ່າງລະອຽດ.

**8** ການສາລະພາບແທ້ຈິງເປັນການສາລະພາບແບບລະອຽດ. ເຮົາຈະຮັບຮູ້ບາບໂດຍຊີ້ບອກແຕ່ລະປະການ ທັງສິ່ງ ທີ່ເຮົາເຮັດບໍ່ດີແລະສິ່ງດີທີ່ເຮົາບໍ່ໄດ້ເຮັດ.ໃຫ້ທ່ານໝາຍ √ ໃສ່ຄວາມໃດທີ່ເປັນການສາລະພາບໂດຍຮັບຮູ້ຢ່າງລະອຽດ.

ກ. ______ ພະອົງເຈົ້າຂ້າ ຂ້າພະເຈົ້າອາດຈະມີເລື່ອງທີ່ຈະສາລະພາບ.
ຂ. ______ ພະອົງເຈົ້າຂ້າ ຂ້າພະເຈົ້າຕົວະພໍ່ຄ້າອາທິດແລ້ວຂໍ ພະເຈົ້າ ຍົກໂທດໃຫ້.
ຄ. ______ ໂອ້ພະອົງເຈົ້າ ຂ້າພະເຈົ້າໄດ້ຂີ້ລັດເມໂດຍບໍ່ເສຍຄ່າປີ້ຂໍຍົກໂທດໃຫ້.
ງ. ______ ພະບິດາເຈົ້າ ຮູ້ສຶກວ່າອາທິດກ່ອນຂ້າພະເຈົ້າອາດເຮັດຜິດຢ່າງໃດ ຢ່າງໜຶ່ງແຕ່ບໍ່ແນ່ນອນຖ້າຜິດກໍ່ຂໍພະ ອົງຍົກໂທດໃຫ້.

**9** ເຮົາຈະເຮັດຢ່າງໃດເພື່ອຫຼີກເວັ້ນຈາກການຮັບສາລະພາບບາບທີ່ບໍ່ເອົາຈິງເອົາຈັງ? _______
_________________________________________________________________

ຕອບ:

**4** *ເອົາຈິງ ເອົາຈັງ.*

**5** *ປິດບັງ...ສາລະພາບ.*

**6** *ຂ.ຖືກ.*

**7** *ຄ. ຖືກ.*

**8** *ຂ. ແລະ ຄ.ຖືກ.*

**9** *ໂດຍສະເໜີບາບຂອງເຮົາຢ່າງລາຍລະອຽດ.*

**10** ມາເຖິງນີ້ ພວກເຮົາເວົ້າເຖິງແຕ່ຜູ້ທີ່ຮັບສາລະພາບບາບຢ່າງບໍ່ເຕັມສ່ວນ ເພາະວ່າເຈົ້າຂອງບໍ່ຢາກຮັບຮູ້ບາບຂອງ ຕົນ.

ກ. ຄົນນັ້ນຄືຄົນທີ່ສາລະພາບໂດຍບໍ່ເອົາ _______________ ເອົາ _________________

ຂ. ແຕ່ຍັງມີອີກຢ່າງໜຶ່ງດ້ວຍຄື: ຜູ້ທີ່ມັກເວົ້າເກີນໄປເລື່ອງຄວາມບາບຂອງຕົນ. ເຂົາອາດຈະສາລະ ພາບເລື່ອງບາບຫຼາຍເທື່ອຕໍ່ຫຼາຍທີ ດ້ວຍບໍ່ສຳນຶກວ່າ ພະເຈົ້າ ຍົກໂທດໃຫ້ແລ້ວ. ອາດຈະແມ່ນວ່າ ເຂົາບໍ່ຮູ້ຄຳສັນຍາຂອງພະເຈົ້າໃນພະຄຳພີທີ່ວ່າ:

"ຖ້າເຮົາທັງຫຼາຍ _____________________ ຜິດບາບຂອງພວກເຮົາ ພະອົງຊົງສັດຊື່ ແລະທ່ຽງທຳ ຈະຊົງໂຜດຍົກບາບຂອງພວກເຮົາ ແລະ ຈະຊົງໂຜດຊຳລະລ້າງເຮົາທັງຫຼາຍຈາກການ ____________________________" (ຕື່ມຄວາມ)

ຄ. ຂໍ້ພະຄຳພີນັ້ນຢູ່ໃສໃນພະຄຳພີ ບົດໃດ ຂໍ້ໃດ? ______________________________

**11** ພະເຈົ້າ ສັນຍາໃນພະຄຳພີວ່າ ຈະຍົກໂທດໃຫ້ຄົນທີ່ສາລະພາບແລ້ວ. ດັ່ງນັ້ນເຖິງເຮົາບໍ່ສຳນຶກວ່າ ພະເຈົ້າຍົກ ໂທດໃຫ້ກໍ່ຕາມແຕ່ວ່າຖ້າພະເຈົ້າ ສັນຍາດັ່ງນັ້ນບໍ່ເໝາະສົມທີ່ພວກເຮົາຈະສົງໄສ. ເທື່ອໃດທີ່ມີຄູ່ດສະຕຽນມັກເວົ້າເຖິງບາບທີ່ສາລະພາບມາແລ້ວຄູ່ດສະຕຽນນັ້ນຄວນຈະຮຽນຮູ້ຂໍ້ພະຄຳພີທີ່ສັນຍາເລື່ອງ ພະເຈົ້າຈະຍົກໂທດໃຫ້ຄົນທີ່ຮັບສາລະພາບ. ໃນຂໍ້ພະຄຳພີຕໍ່ໄປນີ້ມີຂໍ້ໃດທີ່ເປັນປະໂຫຍດຕໍ່ຄົນທີ່ຍັງສົງໄສວ່າພະເຈົ້າບໍ່ໄດ້ຍົກໂທດໃຫ້. ຈົ່ງໝາຍ √ ໄວ້.

______ ກ. ສຸພາສິດ 28:13

______ ຂ. ດານີເອນ 9:9-10

______ ຄ. ໂຢເອນ 2:13

______ ງ. 1 ຕີໂມທຽວ 1:15

______ ຈ. 1 ໂຢຮັນ 1:9

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີຂຽວຂີດກ້ອງຂໍ້ພະຄຳພີເຫຼົ່ານັ້ນ. |

**12** ເພື່ອຊ່ວຍແກ້ໄຂບັນຫາເລື່ອງຄົນທີ່ບໍ່ສຳນຶກວ່າພະເຈົ້າ ຍົກໂທດໃຫ້ ເຖິງວ່າຮັບສາລະພາບມາແລ້ວຈະສອນເຂົາ ຢ່າງໃດ? ໃຫ້ ໝາຍເອົາຂໍ້ທີ່ຖືກ.

ກ. ຖືວ່າບາບຂອງເຂົາໃຫຍ່ຈົນກວ່າຄວາມຕາຍຂອງພະເຢຊູ ບໍ່ພໍທີ່ຈະສຳລະບາບເຂົາໄດ້.

ຂ. ຖືວ່າຄຳສັນຍາຂອງພະຄຳພີຕໍ່ຄົນທີ່ສາລະພາບບາບເປັນຄວາມຈິງຕາຍຕົວ ເຖິງບໍ່ສຳນຶກກໍ່ຕາມ.

ຄ. ໃຫ້ສາລະພາບໄປເລື້ອຍໆຫຼາຍເທື່ອຫວັງວ່າອານາຄົດພະເຈົ້າອາດຈະໃຫ້ເຮົາຮູ້ສຶກໄດ້ຖືກຍົກໂທດແລ້ວ.

ຕອບ:

**10** *ກ. ເອົາຈິງເອົາຈັງ. ຂ. ສາລະພາບຄວາມ... ອະທຳ ໝົດສິ້ນ. ຄ. 1 ໂຢຮັນ 1:9*

**11** *ຖືກທັງ ໝົດ ແຕ່ເອົາ ຄ. ງ. ຈ. ເປັນຂໍ້ສຳຄັນ.*

**12** *ຂ. ຖືກ.*

**13** ແນ່ນອນອາດຈະແມ່ນວ່າຜູ້ກ່ຽວຮັບສາລະພາບບໍ່ຄົບຖ້ວນ.

ກ. ເຮົາຄວນຈະຮັບສາລະພາບບາບທຸກຢ່າງຕໍ່ໃຜ? ____________________________

ຂ. ແຕ່ຖ້າບາບເຮົາເຮັດໃຫ້ຄົນຜູ້ອື່ນເສຍຫາຍຢ່າງໜຶ່ງຢ່າງໃດ ເຮົາຕ້ອງສາລະພາບຕໍ່ທັງ ພະເຈົ້າ ແລະ ຜູ້ໃດ ອີກ? ____________________________________________

**14** ບາບໃດທີ່ເຮັດໃຫ້ຜູ້ອື່ນເສຍຫາຍ ບາບນັ້ນຕ້ອງສາລະພາບຕໍ່ ພະເຈົ້າ ແລະຕໍ່ຄົນຜູ້ນັ້ນ.ອີກຢ່າງໜຶ່ງຕ້ອງເອົາຄືນ ໃຫ້ອັນໃດທີ່ຈະໃຫ້ໄດ້. ຄືຄົນທີ່ຮູ້ສຶກວ່າ ພະເຈົ້າ ບໍ່ຍົກໂທດໃຫ້ອາດຈະ... (ຈົ່ງຕື່ມຄວາມທີ່ຂາດ)

ກ. ບໍ່ໄວ້ໃຈໃນຄຳສັນຍາຂອງ ພະເຈົ້າ ໃນ ___________________________ ຫຼື ອາດຈະ

ຂ. ຮັບຕໍ່ ພະເຈົ້າ ແຕ່ຍັງບໍ່ໄດ້ສາລະພາບຕໍ່ ___________________________________

**15** ການສາລະພາບເອົາຈິງເອົາຈັງເປັນຢ່າງໃດ? ___________________________________

**16** ຖ້າມີຄົນໃດກັບໄປເວົ້າເລື່ອງບາບທີ່ສາລະພາບມາແລ້ວ ທ່ານຈະຊ່ອຍໃຫ້ເພິ່ນແກ້ໄຂຢ່າງໃດ?

_________________________________________________________________

_________________________________________________________________

**17** ດັ່ງນັ້ນເຮົາຄວນຈະຮັບສາລະພາບດ້ວຍໃຈຈິງ ແລ້ວຫຼີກ ໜີຈາກຄວາມສາລະພາບທີ່ບໍ່ເອົາຈິງເອົາຈັງ ຫຼື ຄວາມສາລະພາບທີ່ຍົກແຕ່ເລື່ອງເກົ່າຫຼາຍເກີນໄປ. ການສາລະພາບຢ່າງຈິງໃຈຈະຊີ້ບອກບາບຢ່າງລະອຽດແລ້ວຖືວ່າພະເຈົ້າສຳລະລ້າງແລ້ວຕາມຄຳສັນຍາ. ດັ່ງນັ້ນຜົນຂອງພະວິນຍານຈະເລີ່ມສະແດງອອກມາແທນບາບ. ໃຫ້ອ່ານ ຢາໂກໂບ 1:22 ແລ້ວໃຫ້ທ່ານຂີດຂ້າອອກປະໂຫຍກໃດບໍ່ຈິງ.

ກ. ຜົນຂອງ ພະວິນຍານປາກົດອອກມາຍ້ອນອ່ານພະຄຳພີຢູ່ສະເໝີ ແລ້ວປະຕິບັດຕາມພະຄຳນັ້ນ.

ຂ. ຜົນຂອງ ພະວິນຍານປາກົດມາ ເພາະເຮົາພະຍາຍາມເຮັດແຕ່ສິ່ງທີ່ດີ.

**18** ພະເຢຊູ ໃຊ້ເຄື່ອງອາວຸດສອງຢ່າງທີ່ ພະບິດາ ປະທານໃຫ້ເວລາຮັບບັບຕິສະມາເພື່ອຕໍ່ສູ້ການທົດລອງຂອງພະຍາ ມານ. ເຊັ່ນດຽວກັນຄຼິດສະຕຽນເຮົາຕ້ອງການເຄື່ອງອາວຸດເຫຼົ່ານັ້ນ ຈຶ່ງຈະຟັງຄວາມຂອງພະອົງແລະດຳເນີນຊີວິດຢ່າງພະອົງຈຶ່ງຈະເກີດດອກອອກຜົນ. ພະເຈົ້າ ປະທານໃຫ້ເຮົາມີເຄື່ອງອາວຸດສອງຢ່າງໃດແດ່? ______________ ແລະ ______________

ຕອບ:

**13** *ກ. ພະເຈາ. ຂ. ຜູ້ທີ່ເສຍຫາຍ (ຜູ້ກ່ຽວກໍ່ໄດ້)*

**14** *ກ.ພະຄຳພີ. ຂ.ຄົນທີ່ຖືກເສຍຫາຍ.*

**15** *ຢ່າງລະອຽດ. (ຈຳເພາະກໍ່ໄດ້)*

**16** *(ບໍ່ມີຄຳຕອບຕາຍຕົວ ໃຫ້ປຽບກັບໝູ່ໃນປະຊຸມຂ້າງໜ້າ)*

**17** *ຂີດຂ້າຂໍ້ ຂ.ອອກ.*

**18** *ພະຄຳພີ ແລະ ພະວິນຍານ.*

**19** ຖ້າຊີວິດຂອງເຮົາຈະເກີດມີຜົນ ເຮົາຈຳເປັນຕ້ອງຮຽນຮູ້ຈາກພະຄຳພີ ເພື່ອໃຫ້ເປັນແບບຢ່າງຂອງເຮົາໃນ ການສາລະພາບບາບແລະໃນການຟັງຄວາມຂອງພະຄຳພີ. ໃນ ຢາໂກໂບ 1:22 ຜູ້ຖິ້ມໃຈເກົ່າເອົາໃຈໃໝ່ຢ່າງແທ້ຈິງຈະກາຍເປັນຢ່າງໃດ? ________________________

**20** ຕາມ ຢກບ 1:22 ນັ້ນຜູ້ທີ່ພຽງແຕ່ໄດ້ຍິນເທົ່ານັ້ນແຕ່ບໍ່ໄດ້ຂັບຕາມເປັນຢ່າງໃດ? ________

**21** ໃຫ້ອ່ານ ຢກບ 1:23-24 ດ້ວຍ. ຜູ້ທີ່ໄດ້ຍິນ ແຕ່ບໍ່ໄດ້ຂັບຕາມຄືຫຍັງ? ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ.

ກ. ຜູ້ທີ່ຟັງຄວາມຂອງ ພະບັນຍັດ.

ຂ. ຜູ້ທີ່ເບິ່ງໜ້າຂອງຕົນໃນແວ່ນແລ້ວກໍ່ລືມວ່າຕົນເອງເປັນຢ່າງໃດ?

ຄ. ຜູ້ທີ່ຮັກພະເຈົ້າດ້ວຍໃຈຈິງ.

**22** ໃຫ້ອ່ານ ຢກບ 1:25 ດ້ວຍ. ຜູ້ທີ່ພິຈາລະນາໃນພະທຳແລະຕັ້ງຢູ່ໃນນັ້ນຈະເປັນຢ່າງໃດ? ໃຫ້ເລືອກ...

ກ. ເໝືອນຄົນທີ່ເບິ່ງ ໜ້າຂອງຕົນໃນແວ່ນແລ້ວລືມວ່າຕົວເອງເປັນຢ່າງໃດ?

ຂ. ເປັນຜູ້ທີ່ຂັບຕາມພະທຳແລ້ວຈະໄດ້ຮັບຄວາມສຸກ.

ຄ. ກຳລັງດີຢູ່ ແຕ່ບໍ່ສົມຄວນຈະໄປປ່າວປະກາດມີແຕ່ຮຽນໄປຢ່າງດຽວ.

**23** ໃຫ້ທ່ານເບິ່ງຮູບຂ້າງລຸ່ມນີ້:



ເຮົາຈະຮຽນຮູ້ການໃຊ້ພະຄຳພີໃນການສາລະພາບແລະການເຊື່ອຟັງຄວາມຕໍ່ໄປ. ຕາມໃນຮູບນັ້ນເທື່ອໃດທີ່ເຮົາອ່ານໃນພະຄຳພີເຮົາໃຊ້ພະຄຳພີມາເປັນ ________________________ ໃຫ້ເຮົາເຫັນຕົວຈິງຂອງເຮົາ. (ຈົ່ງຕື່ມຄວາມ)

ຕອບ:

***19*** *ຜູ້ຂັບຕາມພະທຳ.*

***20*** *ຫຼອກລວງຕົວເອງ.*

***21*** *ຂ.ຖືກ.*

***22*** *ຂ.ຖືກ.*

***23*** *ແວ່ນ.*

**24** ເຖິງຢ່າງໃດກໍ່ຕາມ ຄັນເຮົາພຽງແຕ່ອ່ານເລື່ອງບາບ ເລື່ອງການຮັບສາລະພາບບາບ ໆລໆ ຢ່າງດຽວບໍ່ພໍ ເທື່ອ. ເຮົາຕ້ອງຂັບ ________________________ ດ້ວຍ. (ຕື່ມຄວາມທີ່ຂາດ)

**25** ເຮົາຄວນຈະກາຍເປັນຜູ້ທີ່ ຂັບຕາມພະທຳ ໝາຍຄວາມວ່າ ເຮົາຕ້ອງປະຕິບັດຕາມຳໂດຍລະຖິ້ມການ ກະທຳບາໂດຍຮັບ __________________ ຕໍ່ ພະເຈົ້າແລະຕໍ່ຄົນໃດທີ່ເສຍຫາຍຍ້ອນຄວາມບາບຂອງເຮົາແລະ ເຮົາຈະສວມສະພາບຕາມແບບຊີວິດໃໝ່. (ຕື່ມຄຳ)

**26** ເທື່ອໃດ ທີ່ເຮົາໃຊ້ພະຄຳພີມາເປັນແວ່ນ ເຮົາຈະຄົ້ນພົບເຫັນຄວາມ ________________ ເພື່ອຈະປະຖິ້ມແລ້ວຈະຊອກຫາ ແບບຊີວິດໃໝ່ມາສວມສະພາບ.

**27** ຂໍ້ພະຄຳພີໃດຕໍ່ໄປນີ້ ເວົ້າເຖິງການປະລະບາບແລະເອົາຊີວິດໃໝ່?
ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ.

ກ. ອຟຊ 4:22-24

ຂ. ກລຊ 3:9-11

ຄ. 1 ທຊນ 1:9

ງ. 1 ປຕ 3:9

**28** ດັ່ງນັ້ນຜູ້ທີ່ຂັບຕາມພະທຳ ໝາຍຄວາມວ່າເຮົາຈະຮຽນຮູ້ພະຄຳພີແລ້ວປະຕິບັດຕາມ. (ຕື່ມຄວາມ)

ກ. ເຮົາຈະຖອກຖິ້ມບາບດ້ວຍຮັບ ____________________________________

ຂ. ເຮົາຈະສວມສະພາບຊີວິດໃໝ່ດ້ວຍຟັງຄວາມ ພະ_____ ພີ ແລະ ພະ_________ ບໍລິສຸດ.

**29** ໃຫ້ທ່ານອ່ານ ອຟຊ 4:28

ກ. ຄົນທີ່ເຊື່ອໃນພະເຢຊູ ຈະຖອດຖິ້ມການເປັນຄົນຝ່າຍໃດ? ____________________

ຂ. ຈະເຮັດຢ່າງໃດ ເພື່ອຫາລ້ຽງຕົວເອງຕໍ່ໄປ? ______________________________

**30** ກ. ຜູ້ທີ່ປະຖິ້ມໃນການເປັນຄົນຂີ້ລັກ ຕໍ່ໄປຈະຕ້ອງສາລະພາບຕໍ່ມະນຸດດ້ວຍບໍ່? ________

ຂ. ເພິ່ນຈະຕ້ອງເອົາຫຍັງຄືນໃຫ້ໃຜ? __________________________________

ຕອບ:

***24*** *ຂັບຕາມ.*

***25*** *ສາລະພາບ.*

***26*** *ບາບ.*

***27*** *ທັງ 4 ຂໍ້*

***28*** *ກ. ສາລະພາບ. ຂ. ພະຄຳພີ ແລະ ພະວິນຍານ.*

***29*** *ກ. ຂີ້ລັກ. ຂ. ອອກເຫື່ອແຮງ.*

***30*** *ກ. ຕ້ອງສາລະພາບ. ຂ. ເອົາຊັບທີ່ລັກມາຄືນໃຫ້ເຈົ້າຂອງ.*

**31** ກ. ໃຫ້ອ່ານ ຟລປ 4:6 ໃນຂໍ້ນີ້ຄຼິດສະຕຽນຖອກຖິ້ມຫຍັງ? ________________________

ຂ. ຈະສວມສະພາບອັນໃດມາແທນ? ______________________________________

**32** ໃຫ້ອ່ານ ໂລມ 12:12 ຂໍ້ພະຄຳພີທີ່ບອກວ່າຄຼິດສະຕຽນຈະເປັນຢ່າງໃດ? ຈົ່ງຕື່ມຄວາມທີ່ຂາດ. ຈົ່ງ ____________________ ໃນຄວາມໄວ້ວາງໃຈ.

ຈົ່ງ ____________________ ຕໍ່ຄວາມຍາກລຳບາກ.

ຈົ່ງ ____________________ ໃນການໄວ້ວອນ.

**33** ບັດນີ້ເຮົາຈະເອົາ ໂລມ 12:12 ນັ້ນມາເປັນແວ່ນ. ຜູ້ຢູ່ໃນຮູບນີ້ເບິ່ງເຫັນສະພາບຂອງຕົວເອງໃນພະຄຳພີ (ຄືເປັນ ແວ່ນ) ໃຫ້ທ່ານຕື່ມຄວາມທີ່ຂາດໃນຮູບນັ້ນ.




**34** ຫຼັງຈາກຮັບສາລະພາບຕາມຂໍ້ພະຄຳພີນີ້ແລ້ວ ຄຼິດສະຕຽນເຮົາຕ້ອງຂໍໃຫ້ ພະວິນຍານບໍລິສຸດຊ່ວຍໃຫ້ຊົມຊື່ນຍິນ ດີໃນຄວາມ ______________ ໃຫ້ອົດທົນຕໍ່ຄວາມ ____________ ແລະ ໃຫ້ໝັ່ນເອົາໃຈໃສ່ໃນການ______________________________ (ຈົ່ງຕື່ມຄວາມ)

**35** ໃຫ້ທ່ານອ່ານ ຄລຕ 6:2 ຄົນຄຼິດສະຕຽນຈົ່ງຊ່ອຍກັນຢ່າງໃດ? ____________________

ຕອບ:

**31** *ກ. ການທຸກຮ້ອນໃຈ. ຂ. ຈົ່ມທຸກຕໍ່ ພະເຈົ້າ.*

**32** *ຊົມຊື່ນຍິນດີ. ອົດທົນ. ໝັ່ນເອົາໃຈໃສ່.*

**33** *ຊົມຊື່ນຍິນດີ. ອົດທົນ. ໝັ່ນເອົາໃຈໃສ່*

**34** *ໄວ້ວາງໃຈ... ຍາກລຳບາກ... ໄຫວ້ວອນ.*

**35** *ຊ່ອຍຮັບພາລະ ຮັກຂອງກັນແລະກັນ.*

**36** ຄຳວ່າ "ຮັບພາລະອັນໜັກຂອງກັນແລະກັນ" ໝາຍຄວາມວ່າຫຍັງ? ໃຫ້ເລືອກ

ກ. ບໍ່ຫ່ວງກັບຄົນທີ່ທຸກຍາກລຳບາກ.

ຂ. ຊ່ວຍຄົນທີ່ທຸກຍາກລຳບາກ.

ຄ. ສ້າງພາລະອັນໜັກໃຫ້ຜູ້ອື່ນແບກ.

**37** ຖ້າຄຼິດສະຕຽນຄົນທີ່ບໍ່ເຄີຍດຳເນີນຊີວິດໄປຕາມ ຄລຕ 6:2 ນັ້ນ ແລ້ວເພິ່ນຕັດສິນໃຈວ່າຈະຟັງຄວາມຂອງພະ ເຈົ້າຕາມຂໍ້ພະຄຳພີນັ້ນຕໍ່ໄປເພິ່ນຕ້ອງສາລະພາບຫຍັງກ່ອນ? __________

______________________________________________________________

**38** ແມ່ນຂໍ້ພະຄຳພີໃດທີ່ບອກວ່າ ຖ້າເຮົາສາລະພາບຜິດບາບຂອງເຮົາພະອົງຊົງສັດຊື່ແລະທ່ຽງທຳຍົກບາບຂອງ ເຮົາແລ້ວຈະຊຳລະລ້າງເຮົາຈາກບາບ? __________________________

**39** ໃຫ້ອ່ານ ເອເຟໂຊ 4:29 ແລ້ວຕອບຄຳຖາມດັ່ງຕໍ່ໄປນີ້:

ກ. ຄຼິດສະຕຽນຄວນຈະຫຼີກໜີການເວົ້າຄວາມແບບໃດ? ________________________

ຂ. ຄຼິດສະຕຽນໃດທີ່ບໍ່ໄດ້ເຮັດຕາມ ອຟຊ 4:29 ນັ້ນຈະຮັບສາລະພາບຢ່າງໃດ? _________

______________________________________________________________

**40** ໃຫ້ອ່ານ 1 ປຕ 3:8

ກ. ຂໍ້ນັ້ນບອກໃຫ້ຄຼິດສະຕຽນທຸກຄົນເປັນຢ່າງໃດ? ____________________________

ຂ. ຈະຮັບສາລະພາບບາບນັ້ນດ້ວຍການເວົ້າຢ່າງໃດ? __________________________

**41** ຈົ່ງອ່ານ ເອເຟໂຊ 5:16

ກ. ໃນຂໍ້ນີ້ໄດ້ບອກໃຫ້ເຮົາຈົ່ງເຮັດຫຍັງ? ___________________________________

ຂ. ຈະຮັບສາລະພາບເລື່ອງນັ້ນຢ່າງໃດ? ___________________________________

ຕອບ:

**36** *ຂ. ຖືກ.*

**37** *"ຂ້າພະເຈົາຮັບສາລະພາບຕໍ່ພະອົງວ່າ ບໍ່ໄດ້ ຊ່ອຍຄົນທຸກຍາກລຳບາກ" ຫຼື ຄຳຄ້າຍຄືກັນກໍ່ໄດ້.*

**38** *1 ໂຢຮັນ 1:9*

**39** *ກ. ຄຳຫຍາບຊ້າ. ຂ. ຂ້າພະເຈົາຮັບຕໍ່ພະອົງວ່າ ເຄີຍເວົາຄວາມຫຍາບຊ້າບໍ່ຈົບ ບໍ່ດີ.*

**40** *ກ. ເປັນນ້ຳ ໜຶ່ງໃຈດຽວ ເຫັນອົກ ເຫັນໃຈກັນ ຮັກກັນ ມີຈິດໃຈເອັນດູຖ່ອມລົງ.*

*ຂ. "ຂ້າແດ່ພະອົງເຈົາຂ້າພະເຈົາບໍ່ໄດ້ເປັນຈິດ ໜຶ່ງໃຈດຽວ (ໆລໆ) ຕໍ່ພີ່ນ້ອງຄຼິດສະຕຽນ ຂໍໃຫ້ພະ ອົງ ຊ່ອຍໃຫ້ປ່ຽນແປງ..." ໆລໆ*

**41** *ກ. ສວຍເອົາໂອກາດ. ຂ. " ຂໍໃຫ້ ພະເຈົາ ຍົກໂທດວ່າ ຂ້າພະເຈົາມັກຟັງດົນຕີຫຼາຍໂພດ ຈຶ່ງບໍ່ໄດ້ເຮັດວຽກ " ໆລໆ*

*ການຮັບສາລະພາບຜິດບາບນັ້ນເປັນສິ່ງທີ່ສຳຄັນຫຼາຍໃນຊີວິດ ຄຣິດສະຕຽນເພາະເປັນວິທີທາງທີ່ພະເຈົ້າ ຈະຍົກໂທດບາບຂອງເຮົາໃຫ້ຫາຍໄປ. ອີກຢ່າງໜຶ່ງເປັນວິທີກໍ່ສ້າງຄວາມສຳພັນລະຫວ່າງເຮົາກັບພະເຈົ້າ ແລະ ລະຫວ່າງ ເຮົາກັບຄົນອື່ນອີກດ້ວຍ. ໃຫ້ທ່ານຕັ້ງໃຈເພື່ອຈະມີນິໄສວ່າ ຕອນໃດທີ່ຈະສັງເກດຮູ້ເລື່ອງບາບໃຫ້ສາລະພາບບາບນັ້ນທັນທີ. ຖ້າເຮັດຢ່າງນັ້ນທ່ານຈະມີຜົນດ້ານວິນຍານແລະ ຈະຢູ່ໃກ້ສິດກັບພະເຈົ້າ*

.

*ຢ່າລືມເຮັດບົດເສັງ!*